# ສິດທິຂອງຄົນໄຂ້ ຣັຖມິນນີໂຊຕາ
## (Minnesota Patients' Bill of Rights-Lao)

### ເຈດຕະນາຂອງກົດໝາຍ

ເຈຕະນາຂອງກົດໝາຍແລະຈຸດປະສົງຂອງການປະກາດນີ້ແມ່ນເພື່ອປົກປ້ອງຮັກສາ ແລະສົ່ງເສີມຜົນປະໂຍດ ແລະຄວາມຄົງຢູ່ຂອງຄົນເຈັບໃນທີ່ປິ່ນປົວຮັກສາເບິ່ງແຍງ.ຈະບໍ່ມີສຖານທີ່ປິ່ນປົວຮັກສາເບິ່ງແຍງໃດໆຈະ ສາມາດຮຽກຮ້ອງໃຫ້ຄົນເຈັບສລະສິດທິຂອງຕົນເພື່ອເປັນເງື່ອນໄຂ ໃນການເຂົ້າມາຢູ່ໃນສຖານທີ່ເບິ່ງແຍງ. ຜູ້ປົກຄອງຫຼືຜູ້ທີ່ຖືກແຕ່ງຕັ້ງ, ຜູ້ທີ່ສົນໃຈ ອາດຈະໃຊ້ສິດທິເຫຼົ່ານີ້ໃນນາມຂອງທ່ານ. ຖ້າຜູ້ເບິ່ງແຍງທ່ານ, ຜູ້ຖືກແຕ່ງຕັ້ງໃຫ້ເປັນຕົວແທນ ຫຼືຜູ້ຕ່າງໜ້າຜ່ານທາງອົງກອນ ຫຼື ພນັກງານຂອງສານທີ່ຖືກ ແຕ່ງຕັ້ງຂື້ນ ມາຈະມີສິດທີ່ຈະໃຊ້ສິດເຫຼົ່ານີ້. ສຸດຂື້ນກັບຜົນ ອອກແລະຂັ້ນຕອນຂອງການດຳເນີນ ທາງດ້ານສະຖານທີ່ ສາທາຣະນະສຸກທີ່ອາດຈະຕຣົງໄປຕຣົງມາພຽງໃດ ເພື່ອຈະໃຫ້ຖືກຕ້ອງກັບວິທີທາງດຳເນີນ ທາງດ້ານຜູ້ຄອງ ແລະຜູ້ທີ່ຖືກແຕ່ງຕັ້ງທາງກົດໝາຍ. ອີງຕາມກົດໝາຍຂອງບ້ານເມືອງເພື່ອຊາດສາສນາ ແລະລວມທັງສິດທິທີ່ ເປັນເຈົ້າຂອງແຫ່ງຕົນວ່າທຸກຄົນຕ້ອງມີສິດເສຣີພາບເປັນເຈົ້າຂອງຕົນເອງສາມາດຕັດສິນໃຈແລະເລືອກເສັ້ນ ທາງຊີວິດເອງໂດຍຈະບໍ່ໃຫ້ໃຜມາກີດກັ້ນແລະທາງສຖານທີ່ ຢູ່ອາສັຍ ຕ້ອງໄດ້ປະກາດໃຫ້ຮູ້ແລະຊ່ວຍເຫຼືອ ທຸກສິ່ງຢ່າງເທົ່າທີ່ເປັນໄປໄດ້ເພື່ອໃຫ້ປວງຊົນໄດ້ຮູ້ຈັກສິດທິແລະຮູ້ຈັກໃຊ້ສິດທິຂອງເຂົາທັງຫຼາຍ ເຫຼົ່ານີ້ຢ່າງ ເຕັມປ່ຽມ.

### ການຕີຄວາມໝາຍ

ພາຍໃນຂອບເຂດຂອງກົດໝາຍນີ້."ຄົນເຈັບ" ໝາຍເຖິງຄົນຜູ້ເຂົ້າຮັບການປິ່ນປົວຮັກສາໃນສຖານທີ່ໆດົນກວ່າ 24 ຊົ່ວໂມງ, ໂດຍມີຈຸດປະສົງກວດສຸຂະພາບປິ່ນປົວຮັກສາໂຣກທາງດ້ານຮ່າງກາຍແລະຈິດໃຈ ຂອງຄົນ ຜູ້ນັ້ນ. "ຄົນເຈັບ"ໝາຍເຖິງເດັກໄວຣຸ່ນທີ່ເຂົ້າໄປ ຮັບການ ປິ່ນປົວຢູ່ໃນສຖານທີ່ ພຍາບານເໝືອນ ດັ່ງທີ່ໄດ້ ກ່າວໄວ້ໃນກົດໝາຍພາກ 7, ຂອງກົດໝາຍແຫ່ງຣັຖມິນນີໂຊຕາ 1986 ບົດ 326. ໃນຂອບເຂດ ຂອງ ກົດໝາຍນີ້ "ຄົນເຈັບ" ຍັງໝາຍເຖິງທຸກຄົນທີ່ເຂົ້າໄປຮັບການປິ່ນປົວ ດ້ານຈິດໃຈ ທີ່ເປັນຄົນ ເຈັບສາຂານອກ ສຖານທີ່ເບິ່ງແຍງ ຫຼື ຢູ່ໃນໂຄງການສຸຂະພາບຂ້າງນອກຫຼື ໂຄງການສຸຂພາບອື່ນໆ ຈັດຂື້ນ ດວ້ຍສມາຄົມອື່ນໆ.

### ນະໂຍບາຍຂອງການປະກາດແຈ້ງບອກທາງສາທາຣະນະຊົນ

ນີ້ເປັນການປະກາດແຈ້ງຂອງຣັຖວ່າຜົນປະໂຍດຂອງຄົນເຈັບຈະຖືກປົກປ້ອງຕາມການປະກາດຂອງຍັດຕິ ດ້ານສິດທິທາງກົດໝາຍສຳຣັບຄົນເຈັບ, ຊຶ່ງປະກອບດວ້ຍແຕ່ບໍ່ໄດ້ຈຳກັດແຕ່ສິດທິທີ່ບົ່ງໄວ້ໃນມັດຕິນີ້.

## 1. ລາຍລະອຽດກ່ຽວກັບສິດທິ

ເວລາຄົນເຈັບເຂົ້າໄປຮັບການປິ່ນປົວນັ້ນ, ເຂົາເຈົ້າຄວນຈະໄດ້ຖືກແຈ້ງໃຫ້ຊາບເຖິງສິດທິຕ່າງໆຂອງເຂົາເຈົ້າ ສໍາຮັບການປົກປ້ອງຮັກສາໃນລະຫວ່າງ ທີ່ເຂົາຈະເຂົ້າມາຮັບການປິ່ນປົວ ຕົວໃນສຖານທີ່ນີ້ ຫຼືໃນລະຍະ ການປິ່ນປົວແລະຮັກສາໃນປະຊາຄົມແລະສິດເຫຼົ່ານີ້ຈະບັນລະຍາຍ ໃນການປະກາດ ເປັນລາຍລັກອັກສອນ ໃຫ້ເປັນສິດທິແລະຄວາມຮັບຜິດຊອບດັ່ງທີ່ບົ່ງໄວ້ໃນພາກນີ້. ໃນກໍຣະນີທີ່ຄົນເຈັບຈະເຂົ້າໄປຮັບການປິ່ນປົວ ໃນສະຖານທີ່ ເບິ່ງແຍງດັ່ງໄດ້ກ່າວໄວ້ໃນພາກທີ 7. ໜັງສືແຈ້ງບອກເຖິງສິດທິນີ້ຈະໄດ້ ບັນລະຍາຍເຖິງສິດທິ ຂອງເດັກໄວຣຸ່ນອາຍຸ 16 ປີ ຫຼືແກ່ກວ່ານັ້ນ. ໃນການເປີດປ່ອຍຂໍ້ມູນຕ່າງໆໄປໃຊ້ໃນທາງຊອບທັມຕາມ ກົດໝາຍ ມາຕຣາ 253B.04 ວັກທີ 2. ແລະຈະໄດ້ບອກລາຍຊື່, ເລກໂທຣສັບຂອງບຸກຄົນ, ຫຼືອົງກອນ ທີ່ເປັນຜູ້ສະນັບສະນູນທາງດ້ານກົດໝາຍໃຫ້ແກ່ຄົນເຈັບໃນໃນສຖານທີ່ເບິ່ງແຍງຄວາມສະດວກຕາມຄວາມ ເໝາະສົມຕ້ອງອໍານວຍ ໃຫ້ແກ່ບັນດາຜູ້ຫູນວກຕາບອດແລະຜູ້ປາກພາສາອັງກິດບໍ່ໄດ້. ນະໂຍບາຍ ຂອງ ສຖານທີ່ ຜົນຂອງການກວດກາຂອງຣັຖ, ແລະເຈົ້າໜ້າທີ່ທ້ອງຖິ່ນດ້ານ ສາທາຣະນະສຸກ. ການອະທິບາຍ ກ່ຽວກັບສິດທິຕ່າງໆຄວນຈະໄດ້ກະຕຽມ ມີໃຫ້ສໍາຮັບຄົນເຈັບ, ຫຼືຜູ້ປົກຄອງເຂົາເຈົ້າ ຫຼື ຕົວແທນຂອງເຂົາເຈົ້າ ຕາມຄໍາຮ້ອງຂໍຕໍ່ຜູ້ປົກຄອງຫຼືພນັກງານກ່ຽວຂ້ອງ ອີງຕາມກົດໝາຍແຫ່ງຣັຖ ບົດ 13 ຂອງການໃຊ້ ຂໍ້ມູນ ກົດໝາຍ (Data Practices Act) ພາກທີ 626.557, ກ່ຽວກັບຜູ້ໃຫ່ຍທີ່ຕົກຢູ່ຂັ້ນອັນຕະຣາຍ.

## 2. ການປິ່ນປົວຮັກສາດ້ວຍກຽດແລະສັກສີ

ຄົນເຈັບທຸກຄົນມີສິດທິໄດ້ຮັບການປິ່ນປົວຢ່າງມີກຽດແລະສັກສີຈາກພນັກງານ ຫຼືຈາກບຸກຄົນທີ່ບໍຣິການ ດ້ານສຸຂພາບໃນສຖານທີ່ເບິ່ງແຍງ.

## 3. ການປິ່ນປົວອັນເໝາະສົມ

ຄົນເຈັບຈະມີສິດໄດ້ຮັບການປິ່ນປົວອັນເໝາະສົມຕາມຄວາມຕ້ອງການຂອງຕົນ. ສິດທິເຫຼົ່ານີ້ຈະຈໍາກັດທີ່ສຸດ ໃນເມື່ອຫາກການບໍຣິການບໍ່ຖືກໃຊ້ ຈ່າຍແທນຈາກທາງສາທາຣະນະຫຼື ກັບທາງພາກເອກກະຊົນ.

## 4. ຫຼັກການຂອງນາຍແພດ

ຄົນເຈັບຈະໄດ້ຮັບເປັນໜັງສືທີ່ແຈ້ງບອກເຖິງເຊັ່ນ ຊື່, ທີ່ຢູ່ທໍາງານ, ເລກໂທຣສັພ, ຄວາມຊ່ຽວຊານຂອງ ນາຍແພດຜູ້ທີ່ຮັບຜິດຊອບປິ່ນປົວທ່ານ.ໃນກໍຣະນີທີ່ປະຕິບັດບໍ່ໄດ້ຍ້ອນສາຍເຫດການແພດດັ່ງທີ່ບັນທຶກໄວ້ໂດຍ ນາຍແພດປະຈໍາ, ຂໍ້ມູນຕ່າງໆເຫຼົ່ານັ້ນຄວນຈະຕອ້ງມອບໃຫ້ ແກ່ຜູ້ປົກຄອງ ຫຼືບຸກຄົນທີ່ຄົນເຈັບ ເປັນຜູ້ເລືອກໃຫ້ ເປັນຕົວແທນເຂົາເຈົ້າ.

## 5. ຄວາມສຳພັນກັບອົງການບໍຣິການຮັກສາເບິ່ງແຍງອື່ນໆ

ຄົນເຈັບທີ່ປິ່ນປົວຢູ່ນອກສຖານທີ່ນັ້ນມີສິດໄດ້ຖືກແຈ້ງບອກຕາມຄວາມຂໍຮ້ອງໃຫ້ຮູ້ເຖິງຫຼັກຖານຂອງຜູ້ທີ່ບໍຣິການເຂົາ. ຂໍ້ມູນທີ່ແຈ້ງບອກ ເຫຼົ່ານີ້ຈະປະກອບດ້ວຍຊື່ອງຜູ້ບໍຣິການພາຍນອກທີ່ຢູ່, ແລະລາຍລະອຽດຂອງການບໍຣິການ. ໃນກໍຣະນີທີ່ປະຕິບັດບໍ່ໄດ້ຍ້ອນສາຍເຫດການແພດດັ່ງ ບັນທຶກໄວ້ໂດຍນາຍແພດປະຈຳຕົວ. ຂໍ້ມູນຕ່າງໆເຫຼົ່ານີ້ ຄວນຈະມອບໃຫ້ແກ່ຜູ້ປົກຄອງຂອງຄົນເຈັບ, ຫຼືຕົວແທນຂອງເຂົາເຈົ້າ.

## 6. ລາຍລະອຽດກ່ຽວກັບການປິ່ນປົວ

ຄົນເຈັບຈະຖືກບອກໃຫ້ຊາບໂດຍທ່ານໝໍປະຈຳໃຫ້ຮູ້ທຸກຢ່າງທັງອະດີດ ແລະປະຈຸບັນກ່ຽວກັບຜົນຂອງການກວດວິໃຈສຸຂພາບການປິ່ນປົວການ ປິ່ນປົວແບບອື່ນການສ່ຽງພັຍ ແລະຄຳທວາຍອາການຂອງເຂົາເຈົ້າ ຕາມໜ້າທີ່ຂອງນາຍແພດທີ່ຈຳຕ້ອງເປີດເຜີຍຂໍ້ມູນຕ່າງໆເຫຼົ່ານີ້ຈະຕ້ອງໃຊ້ ພາສາທີ່ຄົນເຈັບ ຈະເຂົ້າໃຈໄດ້ ຄົນເຈັບສາມາດຖືກຕິດຕາມດ້ວຍສະມາຊິກຄອບຄົວຫຼືຜູ້ຕ່າງໜ້າທີ່ເລືອກໄວ້ແລ້ວ. ຂໍ້ມູນເຫຼົ່ານີ້ຈະປະກອບດ້ວຍຜົນ ການແພດແລະຈິຕຂອງການປິ່ນປົວແລະການປິ່ນປົວແບບອື່ນຕ່າງໆ. ໃນກໍຣະນີທີ່ປະຕິບັດບໍ່ໄດ້ຍ້ອນສາຍເຫດການແພດດັ່ງບັນທຶກໄວ້ ໂດຍນາຍແພດປະຈຳ, ຂໍ້ມູນຕ່າງໆເຫຼົ່ານີ້ ຈະຕ້ອງມອບໃຫ້ຜູ້ປົກຄອງຫຼືຜູ້ຕ່າງໜ້າຂອງຄົນເຈັບ.

ຄົນເຈັບທັງຫຼາຍທີ່ໄດ້ຮັບຄວາມເຈັບທໍຣະມານ ຈາກໂຣກມະເລັງເຕົ້ານົມ ຈະຕ້ອງຖືກແຈ້ງໃຫ້ ຮູ້ກ່ອນເຂົ້າຮັບການປິ່ນປົວຫຼືໃນລະຫວ່າງທີ່ຄົນເຈັບເຂົ້າປິ່ນປົວ ປະສົບ ແບບຕ່າງໆ ເຣື່ອງການ ປິ່ນປົວແບບອື່ນໆຊຶ່ງນາຍແພດ ຮູ້ຈັກທີ່ອາດຈະລວມເຖິງການຜ່າຕັດ, ປົວທາງເອກເຣ, ປົວດ້ວຍຢາທາເຄມີ, ການປິ່ນປົວປະສົມແບບຕ່າງໆ ຜົນທີ່ສ່ຽງໃນການປິ່ນປົວຂອງແຕ່ລະວິທີ.

## 7. ການເຂົ້າຮ່ວມໃນການວາງແຜນການປິ່ນປົວ

ການແຈ້ງໃຫ້ສມາຊິກໃນຄອບຄົວ:

(ກ) ຄົນເຈັບຄວນຈະມີສິດໄດ້ເຂົ້າຮ່ວມໃນການວາງແຜນການປິ່ນປົວຂອງເຂົາເຈົ້າ. ສິດທິເຫຼົ່ານີ້ປະກອບດ້ວຍໂອກາດທີ່ຈະໄດ້ໂອ້ລົມກ່ຽວ ເຣື່ອງການ ປິ່ນປົວແລະແຜນການປິ່ນປົວແບບອື່ນກັບຂອງຜູ້ທີ່ຈະປິ່ນປົວ, ໂອກາດທີ່ຈະຂໍຮ້ອງແລະເຂົ້າຮ່ວມປະຊຸມຢ່າງເປັນທາງການ, ແລະສິດທີ່ຈະໃຫ້ສະມາຊິກ ໃນຄອບຄົວແລະຕົວແທນຂອງຄົນເຈັບ. ໃນກໍຣະນີທີ່ຄົນໄຂ້ບໍ່ສາມາດຈະປະກົດຕົວໄດ້, ສະມາຊິກຂອງຄອບຄົວແລະຫຼືຕົວແທນຂອງ ຄົນເຈັບທີ່ເລືອກໄວ້ ນັ້ນຈະສາມາດມາໃຫ້ຄວາມຮ່ວມໃນການປະຊຸມນີ້.

(ຂ) ຖ້າຄົນເຈັບຖືກນຳເຂົ້າມາປິ່ນປົວບໍ່ຮູ້ສຶກຕົວ, ສລົບ, ຫຼືບໍ່ສາມາດທີ່ຈະເວົ້າຈາກັບຄົນໃຫ້ເຂົ້າໃຈກັນໄດ້, ທາງສຖານທີ່ກໍຈະຕ້ອງໄດ້ທຳທຸກ ສິ່ງຢ່າງທີ່ ຈຳເປັນເພື່ອຈະໄດ້ສົ່ງຂ່າວຄາວໄປແຈ້ງບອກໃຫ້ທາງສະມາຊິກ ໃນຄອບຄົວຂອງຄົນເຈັບຫຼື ຜູ້ທີ່ຄົນເຈັບເລືອກເອົາເປັນຜູ້ຕິດຕໍ່ສຸກເສີນ ໃຫ້ຮູ້ນຳວ່າ ຄົນເຈັບໄດ້ເຂົ້າມາຮັບ ການປິ່ນປົວຢູ່ໃນສຖານທີ່ເບິ່ງແຍງຕາມເຈາະຈົງໄວ້ໃນປະໂຍກ (ຄ) ທາງສຖານທີ່ປິ່ນປົວ ຈະອະນຸຍາດໃຫ້ ສະມາຊິກໃນຄອບຄົວ ເຂົ້າມາຮ່ວມປະຊຸມວາງແຜນການປິ່ນປົວນຳເວັ້ນເສັຍແຕ່ ທາງສຖານທີ່ຈະຮູ້ ຫຼືມີເຫດຜົນທີ່ເຊື່ອວ່າທາງຄົນເຈັບອອກຄຳສັ່ງ ຫຼືຮູ້ວ່າຄົນໃຂ້ ໄດ້ຂຽນໜັງສືສັ່ງບໍ່ຢາກໃຫ້ສະມາຊິກໃນ ຄອບຄົວຂອງເຂົາເຈົ້າເຂົ້າມາຮ່ວມໃນການວາງແຜນການປິ່ນປົວ. ຫຼັງຈາກທີ່ໄດ້ແຈ້ງໄປຍັງສະມາຊິກ ໃນຄອບຄົວແລ້ວແລະກ່ອນທີ່ຈະປ່ອຍໃຫ້ສະມາຊິກໃນຄອບຄົວເຂົ້າມາຮ່ວມໃນການວາງແຜນການປິ່ນປົວນີ້, ທາງສຖານທີ່ຈະຕ້ອງ ພຍາບານ ສຸດຄວາມສາມາດແລະສອດຄ່ອງການປະຕິບັດການແພດ ເພື່ອໃຫ້ຮູ້ແນ່ນອນ ວ່າ ຄົນເຈັບນັ້ນໄດ້ອອກຄຳສັ່ງ ຫຍັງໄວ້ແດ່ກ່ຽວກັບ ການຕັດສິນ ໃຈໃນເຣື່ອງການປິ່ນປົວຂອງຄົນເຈັບນີ້.

ພາຍໃນຂອບເຂດຂອງປະໂຍກນີ້ "ຄວາມພຍາຍາມສຸດຄວາມສາມາດປະກອບດ້ວຍ":

(1) ກວດເບິ່ງຄວາມກະທົບຂອງຄົນເຈັບທີ່ອາດຈະເກີດຂື້ນ
(2) ກວດເບິ່ງປະຫວັດດ້ານສຸຂພິບານຂອງຄົນເຈັບທີ່ອາດຈະມີຢູ່ໃນສຖານທີ່ເບິ່ງແຍງມາກ່ອນແລ້ວ
(3) ສືບຖາມນຳຜູ້ທີ່ຕິດຕໍ່ເວລາສຸກເສີນ, ຫຼືສະມາຊິກ ໃນຄອບຄົວເພື່ອຢາກຮູ້ວ່າ ຄົນເຈັບເຄີຍຂຽນ ສັ່ງບອກໄວ້ລ່ວງໜ້າ. ແລະຢາກ ຮູ້ວ່າຄົນເຈັບເຄີຍໄປປິ່ນປົວນຳນາຍແພດ ຜູ້ໃດມາເປັນ ປະຈຳຫຼືຢ່າງໃດ.
(4) ສືບຖາມນຳທ່ານໝໍທີ່ຄົນເຈັບໄປປິ່ນປົວປະຈຳ, ຖ້າຫາກວ່າຮູ້, ເພື່ອຢາກຮູ້ວ່າຄົນໃຂ້ໄດ້ອອກຄຳສັ່ງໄວ້ລ່ວງໜ້າຫຼືບໍ່, ຖ້າ ທາງສຖານທີ່ ເບິ່ງແຍງໄດ້ແຈ້ງທາງ ສະມາຊິກ ຄອບຄົວແລ້ວ ຫຼືຜູ້ຕິດຕໍ່ເມື່ອເກີດສຸກເສີນ ຫຼືອະນຸຍາດໃຫ້ສະມາຊິກໃນຄອບຄົວເຂົ້າ ຮ່ວມໃນ ການປະຊຸມວາງແຜນການປິ່ນປົວຄົນເຈັບຕາມເງື່ອນໄຂໃນປະໂຍກນີ້, ທາງສຖານທີ່ຈະບໍ່ຮັບຜິດຊອບ ແຈ້ງໃຫ້ສມາຊິກໃນຄອບຄົວຊາບຫຼືຜູ້ຕິດຕໍ່ໃນຍາມ ສຸກເສີນ ຫຼືການເຂົ້າຮ່ວມຂອງສະມາຊິກໃນຄອບຄົວ ທີ່ບໍ່ເໝາະສົມຫຼືລ່ວງລະເມີດສິດທິສ່ວນຕົວຂອງຄົນເຈັບ

(ງ) ໃນການພະຍາຍາມສຸດຄວາມສາມາດແຈ້ງໃຫ້ສະມາຊິກຂອງຄອບຄົວຫຼືຜູ້ຕິດຕໍ່ໃນຍາມສຸກເສີນນັ້ນ, ທາງສຖານທີ່ເບິ່ງແຍງ ກໍຈະ ພຍາຍາມ ຮູ້ຈັກຫຼັກຖານຂອງສມາຊິກຄອບຄົວ ຫຼື ຜູ້ຕິດຕໍ່ໃນຍາມ ສຸກເສີນ ໂດຍກວດເບິ່ງຜົນສະທ້ອນຄົນເຈັບ ແລະບັນທຶກ ການແພດ ຂອງຄົນເຈັບຊື່ງຢູ່ໃນ ກຳມືຂອງ ສຖານທີ່ ເບິ່ງແຍງ. ຖ້າຫາກວ່າທາງສຖານທີ່ບໍ່ສາມາດຈະຕິດຕໍ່ໄປຫາສມາຊິກໃນຄອບຄົວຂອງຄົນເຈັບ ຫຼື ຜູ້ຕິດຕໍ່ໃນຍາມສຸກເສີນພາຍໃນ 24 ຊົ່ວໂມງ ພາຍຫຼັງຄົນເຈັບໄດ້ເຂົ້າມາຮັບການຮັກສາຕົວທີ່ນັ້ນ. ທາງສະຖານທີ່ປິ່ນປົວນີ້ກໍຈະໄດ້ແຈ້ງໄປຍັງສຳນັກງານປະຊາ ສົງເຄາະ ຂັ້ນເມືອງ ແລະກົມຕຳຣວດ ທ້ອງຖິ່ນວ່າມີຄົນເຈັບດັ່ງກ່າວໄດ້ເຂົ້າມາຮັບການປິ່ນປົວຢູ່ໃນສຖານທີ່ນັ້ນແລ້ວພ້ອມແຈ້ງໃຫ້ຊາບວ່າ

ບໍ່ສາມາດ ຈະຕິດຕໍ່ໄປຫາ ຍາດຕິພີ່ນ້ອງຂອງຜູ້ນັ້ນ ຫຼືຜູ້ຕິດຕໍ່ໃນຍາມສຸກເສີນ. ທາງສໍານັກງານປະຊາສົງເຄາະຂອງເມືອງແລະເຈົ້າໜ້າທີ່ຕໍາຣວດທ້ອງຖິ່ນຈະຊ່ວຍເຫຼືອ ສຖານທີ່ເບິ່ງແຍງຄົ້ນຄວ້າຫາ ແລະ ແຈ້ງຍາດຕິພີ່ນ້ອງຫຼືຜູ້ຕິດຕໍ່ຫາໃນຍາມສຸກເສີນ. ສໍານັກງານສົງເຄາະແລະເຈົ້າໜ້າທີ່ຕໍາຣວດທີ່ຊ່ວຍສະຖານທີ່ເບິ່ງແຍງຈະບໍ່ຮັບຜິດຕໍ່ການເສັຍຫາຍຂອງຄົນເຈັບໂດຍທີ່ວ່າການແຈ້ງໃຫ້ສມາຊິກໃນຄອບຄົວຊາບຫຼືຜູ້ຕິດຕໍ່ໃນຍາມສຸກເສີນ ຫຼື ການ ເຂົ້າຮ່ວມຂອງສະມາຊິກຄອບຄົວເໝາະສົມ ຫຼື ລ່ວງລະເມີດສິດທິສ່ວນຕົວຂອງຄົນເຈັບ.

## 8. ການຕໍ່ເນື່ອງຂອງການປິ່ນປົວ

ຄົນເຈັບມີສິດທີ່ຈະໄດ້ຮັບການສຶກສາເບິ່ງແຍງຢ່າງຕໍ່ເນື່ອງແລະສມ່ຳສເມີຈາກພນັກງານຂອງສຖານທີ່ເບິ່ງແຍງ ຕາມທີ່ນະໂຍບາຍຂອງສຖານທີ່ ຈະອໍານວຍໃຫ້.

## 9. ສິດທິປະຕິເສດການປິ່ນປົວ

ຄົນເຈັບທີ່ມີສຕິດີຢູ່ນັ້ນສາມາດທີ່ຈະປະຕິເສດຕໍ່ການປິ່ນປົວອີງຕາມລາຍລະອຽດທີ່ກ່າວໄວ້ໃນສິດທິຂໍ້ທີ 6. ໃນກໍຣະນີ ທີ່ຄົນເຈັບບໍ່ມີຄວາມ ສາມາດທີ່ຮັບຮູ້ເຖິງສພາບໃດໆໄດ້ ຫຼືໄດ້ຖືກຕັດສິນພິຈາຣະນາ ວ່າບໍ່ມີສຕິພຽງພໍທີ່ຮັບຮູ້ ຫຼືໃນເມື່ອຄໍາສັ່ງທາງກົດໝາຍຈະຈໍາກັດສິດທິໃນ ການປະຕິເສດການປິ່ນປົວ, ສພາບ, ແລະສຖານະການຕ່າງໆຄວນຈະຕ້ອງໄດ້ບັນທຶກໃຫ້ຄົບຖ້ວນໂດຍນາຍແພດຜູ້ປິ່ນປົວໄວ້ໃນບັນທຶກການແພດຂອງຄົນເຈັບ.

## 10. ການທົດລອງຄົ້ນຄ້ວາ

ໜັງສືອະນຸຍາດຈະຕ້ອງໄດ້ເຮັດຂື້ນກ່ອນ, ຄົນເຈັບເຂົ້າຮ່ວມໃນການທົດລອງຄົ້ນຄວ້າ. ຄົນເຈັບ ມີສິດປະຕິເສດຕໍ່ການເຂົ້າຮ່ວມ ໃນການຄົ້ນຄວ້າ. ການອະນຸຍາດແລະການປະຕິເສດໃດໆນັ້ນ ກໍຕ້ອງໄດ້ບັນທຶກໄວ້ໃນບັນທຶກການປິ່ນປົວຂອງຄົນເຈັບ.

## 11. ອິດສຣະພາບຈາກການຖືກທາຣຸນ

ຄົນເຈັບມີອິດສຣະພາບຈາກການຖືກທາຣຸນທາງດ້ານຮ່າງກາຍ ແລະຈິດໃຈ ດັ່ງທີ່ໄດ້ກ່າວໄວ້ໃນກົດໝາຍປ້ອງກັນຜູ້ໃຫ່ຍທີ່ຕົກຢູ່ໃນຂັ້ນອັນຕຣາຍ "ທາຣຸນ" ໝາຍເຖິງການກະທໍາໃດໆທີ່ເປັນທາງເພດ, ໂຈມຕີ, ການສວຍໂອກາດ ທາງເພດຫຼືຕ້ອງຄະດີອາຍາດັ່ງທີ່ໄດ້ກ່າວໄວ້ໃນກົດໝາຍພາກທີ 626.5572 ຂໍ້ທີ 15, ຫຼືການຕົບຕ່ອຍໃຫ້ເຈັບປວດ ໂດຍເຈຕະນາແລະບໍ່ເປັນການປິ່ນປົວຫຼືການປະພຶດຢ່າງເນື່ອງນິດໂດຍມີຈຸດປະສົງສ້າງຄວາມເຈັບປວດ ດ້ານສມອງແລະທໍາຣາຍຈິດໃຈ. ຄົນເຈັບທຸກຄົນຈະມີອິສຣະພາບ ຈາກການຜູກມັດທາງຮ່າງກາຍ ແລະການໃຊ້ເຄມີຍົກເວັ້ນແຕ່ໃນ ກໍຣະນີສຸກເສີນ ທີ່ໄດ້ບັນທຶກໄວ້ຢ່າງແຈ້ງຂາວຫຼື ຕາມຄໍາ

ອະນຸຍາດ ເປັນລາຍລັກອັກສອນຫຼັງຈາກການກວດກາໂດຍນາຍແພດຂອງຄົນເຈັບໃນເວລາ ຈຳກັດ ແລະ ເມື່ອຈຳເປັນປ້ອງກັນຄົນເຈັບ ບໍ່ໃຫ້ເຮັດຕົນເອງຫຼືຜູ້ອື່ນປວດເທົ່ານັ້ນ.

**12. ການປິ່ນປົວແບບສ່ວນຕົວ**

ຄົນເຈັບທຸກຄົນຈະມີສິດໄດ້ຮັບການດູແລະນັບຖືສິດສ່ວນຕົວທຸກຢ່າງທີ່ພົວພັນກັບການປິ່ນປົວແລະຮັກສາເບິ່ງແຍງຕ່າງໆ. ການສົນທະນາ, ການ ປຶກສາກວດກາແລະການປິ່ນປົວ ຈະເກັບໄວ້ເປັນເຣື່ອງລັບ ແລະ ຄວນຈະປະຕິບັດກັນຢ່າງເອົາໃຈໃສ່ ສິດສ່ວນຕົວຈະຖືກນັບຖື ເຊັ່ນໃຫ້ຄວາມເຄົາຣົບ ແລະນັບຖື ແລະຊ່ວຍເຫຼືອຄົນໃຂ້ ເວລາຄົນເຈັບ ເຂົ້າຫ້ອງນ້ຳ, ການອາບນ້ຳ, ແລະກິຈະກັມຕ່າງໆກ່ຽວກັບອະນາມັຍສ່ວນຕົວ ຍົກເວັ້ນແຕ່ຄວາມຈຳເປັນ ຄວາມປອດພັຍ ແລະການຊ່ວຍເຫຼືອຄົນເຈັບໃນດ້ານອື່ນໆ.

**13. ຄວາມລັບໃນການເກັບກຳເອກກະສານ**

ຄົນເຈັບຕ້ອງແນ່ໃຈວ່າການບັນທຶກໃດກ່ຽວກັບສຸຂພິບານແລະຕລອດເຖິງເຣື່ອງສ່ວນຕົວນັ້ນຕ້ອງໄດ້ເກັບກຳໄວ້ເປັນຄວາມລັບ, ແລະສາມາດອະນຸຍາດ ຫຼືປະຕິເສດໃນການປະປ່ອຍບັນທຶກການແພດ ໃຫ້ຄົນນອກສຖານທີ່ເບິ່ງແຍງສຳເນົາຂອງບັນທຶກແລະລາຍລະອຽດເປັນລາຍລັກ ອັກສອນ ຈາກບັນທຶກ ນີ້ຈະຕ້ອງເປີດເຜີຍຕາມກົດໝາຍເລກທີ 144.335. ສິດທິເຫຼົ່ານີ້ອາດຈະໃຊ້ບໍ່ໄດ້ໃນເມື່ອເກີດມີການຟ້ອງຮ້ອງສືບສວນ ແລະການກວດກວດກາ ຈາກ ທາງກະຊວງ ສາທາຣະນະສຸກ ຊຶ່ງຖ້າມີການເຊັນສັນຍາ ກັບຜູ້ຈ່າຍຄ່າບໍຣິການນີ້ທີສາມ ຫຼືຖືກຕ້ອງຕາມກົດໝາຍ.

**14. ການແຈ້ງເຖິງການບໍຣິການທີ່ມີ**

ຄົນເຈັບຈະໄດ້ຖືກແຈ້ງໃຫ້ຊາບກ່ອນຫຼືເວລາເຂົ້າໃນລະຫວ່າງປິ່ນປົວຢູ່ກ່ຽວກັບການບໍຣິຫານຕ່າງໆຊຶ່ງບັນຈຸຢູ່ໃນຄ່າຈ່າຍປະຈຳວັນຫຼື ຣາຄາ ຄ່າຫ້ອງແຕ່ລະວັນ ແລະການບໍຣິການອື່ນໆໂດຍທີ່ໄລ່ຣາຄາເພີ່ມຕື່ມ. ສຖານທີ່ຕ້ອງທຳທຸກຢ່າງເພື່ອຊ່ວຍເຫຼືອຄົນເຈັບໃຫ້ຮູ້ລາຍລະອຽດວ່າ ໂຄງການເມດີເຄ ຫຼື ໂຄງການຊ່ວຍເຫຼືອອື່ນໆຈະຊ່ວຍຈ່າຍສ່ວນໃດສ່ວນນຶ່ງຫຼືຈ່າຍໃຫ້ເຕັມກ່ຽວກັບບໍຣິການດັ່ງກ່າວຢູ່ຂ້າງເບື້ອງຕົ້ນນີ້.

**15. ການບໍຣິການຕອບສນອງກັບຄວາມຕ້ອງການ**

ຄົນເຈັບຈະມີສິດໄດ້ຮັບການຕອບສນອງອັນດ່ວນແລະສົມເຫດສົມຜົນ.ຕາມຄຳຖາມແລະຄວາມຮຽກຮ້ອງຕ້ອງການ.

**16. ສິດທິສ່ວນຕົວ**

ຄົນເຈັບຈະມີສິດທິສ່ວນຕົວທຸກເງື່ອນໄຂກ່ຽວກັບສິດທິສ່ວນຕົວບຸກຄະລິກລັກສະນະແລະລັກສະນະວັທນະທັມກ່ຽວພັນກັບການຄົງຢູ່ດ້ານສັງຄົມ, ສາສນາ ແລະຈິດໃຈຂອງເຂົາເຈົ້າ.

## 17. ການຮ້ອງທຸກ

ຄົນເຈັບທຸກຄົນຈະຕ້ອງຖືກສົ່ງເສີມແລະຊ່ວຍເຫຼືອຕລອດການທີ່ເຂົາເຈົ້າຢູ່ໃນສຖານທີ່ເບິ່ງແຍງ ຫຼືຣະຍະ ການປິ່ນປົວ, ໃຫ້ເຂົ້າໃຈຢ່າງທ່ອງແທ້ ແລະໃຊ້ ສິດທິຂອງເຂົາເຈົ້າໃນນາມທີ່ເປັນ ຄົນເຈັບແລະ ເປັນ ພົນລະເມືອງດີ, ຄົນເຈັບສາມາດຮ້ອງທຸກແລະສເນີໃຫ້ທຳການປ່ຽນແປງນະໂຍບາຍ ແລະ ການບໍຣິການ ຕໍ່ພນັກງານຄົນອື່ນໆຕາມໃຈຊອບຂອງເຂົາເຈົ້າ, ປັດສະຈາກການບີບບັງຄັບ, ການລົບກວນ, ການຂົ່ມເຫັງ, ການຈຳແນກ, ການບາດໝາງ, ລວມເຖິງການຂົ່ມຂູ່ທີ່ຈະໄລ່ອອກໄປຈາກສຖານທີ່.
ໜັງສືປະກາດກ່ຽວກັບຫຼັກການຮ້ອງທຸກໃນສຖານທີ່ແລະໃນໂຄງການນີ້ຕຣອດທັງທີ່ຢູ່, ໂທຣສັພ ຂອງຫ້ອງການຕຳນິດຕິຕຣູນກ່ຽວສຖານທີ່ເບິ່ງແຍງແລະຫ້ອງການຮັບຟັງຄຳຮ້ອງທຸກຕາມຮ່າງກົດໝາຍກ່ຽວ ຜູ້ເຖົ້າອາເມຣິກັນ "Older American Act, ພາກ 307(a) (12) ຈະໄດ້ຕິດປະກາດ ໃຫ້ທຸກຄົນເຫັນ.

ທຸກສຖານທີ່ ທີ່ປິ່ນປົວຄົນເຈັບຂານອກ ທຸກໂຄງການທີ່ປິ່ນປົວຮັກສາອີງ ຕາມພາກ 7, ທຸກສຖານທີ່ປິ່ນປົວ ທີ່ມີຄົນງານຫຼາຍ ສອງຄົນຂຶ້ນໄປທີ່ເປີດ ບໍຣິການປິ່ນປົວຄົນເຈັບ ທາງສຸຂພາບຈິດຂານອກນັ້ນ ຕ້ອງໄດ້ຈັດໃຫ້ ມີຫຼັກການໃນການຮັບຟັງຄຳຮ້ອງທຸກຂອງຄົນເຈັບຊຶ່ງ ຢ່າງນ້ອຍຈັດແຕ່ງ ວິທີການ ໄວ້ເພື່ອປະຕິບັດ, ລວມທັງ ກຳນົດເວລາທີ່ທາງສຖານທີ່ເບິ່ງແຍງຈະຕ້ອງໄດ້ຕອບສນອງຄຳຮ້ອງທຸກ, ການຊ່ວຍເຫຼືອໃຫ້ ຄົນເຈັບຈາກຄົນ ສະນັບສະນູນ ຕ້ອງໄດ້ຕອບສນອງຄຳຮ້ອງທຸກເປັນລາຍລັກອັກສອນ, ແຈ້ງໃຫ້ຮັບຄຳຕັດສິນໃຈ ໃນເວລາອັນ ເໝາະສົມໂດຍເຈົ້າໜ້າທີ່ຂອງທີມທີ່ບໍ່ເຂົ້າຂ້າງອອກຂາ ຖ້າວ່າຄຳຮ້ອງທຸກບໍ່ຖືກແກ້ໃຂ ການປະຕິບັດຕາມ ກົດໝາຍ ໂດຍໂຮງພຍາບານໂຄງການຮັກສາເບິ່ງແຍງດັ່ງກຳນົດໄວ້ໃນພາກ 7 ຊຶ່ງເຈາະຈົງໃສ່ ໂຄງການ ປິ່ນປົວພາຍໃນໂຮງພຍາບານແລະສູນກາງຜ່າຕັດຄົນເຈັບສາຂານອກພາຍໃນພາກ 144.691 ແລະ ການ ປະຕິບັດຕາມກົດໝາຍໂດຍອົງການ ຮັກສາສຸຂພາບໃນພາກ 62D.11 ແຕ່ຖືວ່າເປັນການ ປະຕິບັດ ຕາມກົດໝາຍຖືກຕ້ອງຕາມຫຼັກການເປັນລາຍລັກອັກສອນຂອງການຮ້ອງທຸກ.

## 18. ການຕິດຕໍ່ເປັນການສ່ວນຕົວ.

ຄົນເຈັບມີສິດທີ່ຕິດຕໍ່ພົວພັນເປັນການສ່ວນຕົວກັບບຸກຄົນອື່ນໆຕາມຄວາມປະສົງຂອງເຂົາເຈົ້າ, ຍົກເວັ້ນ ແຕ່ ທີ່ໄດ້ກ່າວໄວ້ໃນກົດໝາຍ ແຫ່ງຕາມສິດສ່ວນຕົວ "Minnesota Commitment Act" ແລະສາມາດ ເຂົ້າອອກ ຈາກສຖານທີ່ນີ້ໄດ້ຕາມຄວາມຕ້ອງການ. ຄົນເຈັບມີສິດເຂົ້າເຖິງ ເຄື່ອງມື ຂີດຂຽນ ເຈັ້ຍຂຽນ ສແຕັມ ໂດຍເສັຍ ຄ່າເອງ. ການສົ່ງໜັງສືນີ້ຈະບໍ່ມີການລົບກວນແລະຈະບໍ່ຖືກລັກເປີດ ກ່ອນຄົນເຈັບເວັ້ນເສັຍແຕ່ມີ ຄວາມຈຳເປັນ ຍ້ອນສາຍເຫດ ການແພດທີ່ບັນທຶກໄວ້ໂດຍນາຍແພດໃນບ້ານບັນທຶກການແພດ. ຄົນເຈັບ ສາມາດໃຊ້ ໂທຣສັບເປັນການສ່ວນຕົວໃນສຖານທີ່ເໝາະສົມ. ໃນສຖານທີ່ເບິ່ງແຍງທີ່ບໍ່ສາມາດ ຈັດສຖານທີ່ ສ່ວນຕົວ ຈະຕ້ອງຫາຢ່າງສຸດຄວາມສາມາດເພື່ອຕອບສນອງໃຫ້ຄົນເຈັບໃຊ້ໂທຣສັບເປັນການສ່ວນຕົວສິດນີ້ຈະບໍ່ຈຳກັດ ຖ້າມີສາຍເຫດການແພດບັງຄັບ ດັ່ງທີ່ໄດ້ບັນທຶກໄວ້ໂດຍນາຍແພດປະຈຳໃນກໍຣະນີ ທີ່ ຈຳກັດໂດຍ

ແຜນການປ້ອງກັນການທາຣຸນຂອງສຖານທີ່ເບິ່ງແຍງດັ່ງທີ່ບົ່ງໄວ້ໃນກົດໝາຍ ຄຸ້ມຄອງ ຮັກສາຜູ້ໃຫ່ຍທີ່ຕົກໃນຂັ້ນອັນຕຣາຍ ພາກທີ 626.557 ວັກທີ 14, ຕອນ (b), ສິດທິເຫຼົ່ານີ້ຄວນຈະຈຳກັດຕາມກັນໄປ.

**19. ສັພສິນສວ່ນຕົວ**

ຄົນເຈັບມີສິດໄດ້ເກັບກຳເຄື່ອງນຸ່ງແລະສິ່ງຂອງໄວ້ໃນບ່ອນທີ່ເໝາະສົມ, ເວັ້ນເສັຍແຕ່ສິ່ງເຫຼົ່ານັ້ນ ຈະແຕະຕ້ອງ ແລະ ລົບກວນເຖິງ ສິດທິຂອງ ຄົນອື່ນ, ແລະເວັ້ນເສັຍຄວາມຈຳເປັນດ້ານການແພດສຳຣັບຄວາມປອດ ພັຍ ແລະເຫດຜົນການແພດທີ່ ໄດ້ບັນທຶກໄວ້ ທາງສຖານທີ່ ອາດຈະ, ແຕ່ຈະບໍ່ຈຳຕ້ອງ ທົບແທນ ຫຼືຈ່າຍຄ່າເສັຍຫາຍສິ່ງຂອງທີ່ຖືກເສັຍຫຼືລັກ.

**20. ການບໍຣິການໃນສຖານທີ່**

ຄົນເຈັບຈະບໍ່ທຳງານ ຫຼື ບໍຣິການໃຫ້ແກ່ສຖານທີ່ເບິ່ງແຍງນີ້ ເວັ້ຍເສັຍ ແຕ່ກິດຈະການເຫຼົ່ານັ້ນ ຈະເປັນພາກສວ່ນ ຂອງກາຍະພາບບຳບັດ ແລະ ກ່ຽວພັນກັບຈຸດປະສົງທີ່ບົ່ງໄວ້ໃນບັນທຶກການແພດຂອງເຂົາເຈົ້າ.

**21. ການບໍຣິການກ່ຽວກັບການປົກປ້ອງຮັກສາແລະສນັບສນູນ**

ຄົນໃຊ້ຄວນຈະໄດ້ຮັບສິດໃນການໃຊ້ສິດໃນເຣື່ອງບໍຣິການ ປົກປ້ອງຮັກສາ ແລະນຳພາຂອງເຂົານີ້ ຢ່າງມີເວລາໃຫ້ທີ່ເໝາະສົມ ກໍເພາະເຂົາຈະໄດ້ຮັບການຊວ່ຍເຫຼືອເພື່ອຈະໃຫ້ເຂົ້າໃຈ, ແລະໃຊ້ສິດ, ປົກປ້ອງກັນສິດທິຂອງເຂົາດັ່ງທີ່ໄດ້ລະບຸໄວ້ໃນມາຕຣາຂອງກົດໝາຍ. ສິດທິເຫຼົ່ານີ້ຈະ ລວມເຖິງການຕິດຕໍ່ພົວພັນສວ່ນຕົວລະຫວ່າງຄົນໃຊ້ ແລະຕົວແທນຂອງຄົນໃຊ້ເພື່ອປົກປ້ອງຮັກສາແລະນຳພາ.

**22. ສິດທິໃນການເປີດເຜີຍຂ່າວ ແລະສິດທິໃນການສ້າງສັນ ກັບຜູ້ອື່ນໆ**

ໃນເມື່ອເຂົ້າມາປິ່ນປົວຮັກສາໃນສຖານທີ່ນີ້ຊື່ງ ກົດໝາຍຣັຖບານກາງ ຫ້າມເປີດເຜີຍຂ່າວທີ່ຄົນເຈັບໄດ້ອະນຸຍາດໃຫ້ແກ່ບຸກຄົນອື່ນໆທີ່ໂທຣມາຫາ ຫຼືຢາກຈະມາຢ້ຽມຢາມຄົນເຈັບຫຼືຜູ້ປົກຄອງ, ຫຼືຕົວແທນທີ່ຖືກແຕ່ງຕັ້ງຕາມກົດໝາຍຈະໄດ້ມີໂອກາດອະນຸຍາດເປີດເຜີຍວ່າ ຄົນເຈັບໄດ້ອາສັຍ ຢູ່ສຖານທີ່ຮັກສາໃຫ້ມີຜູ້ທີ່ໂທຣມາຫາ ຫຼືຜູ້ທີ່ເຂົ້າມາຢ້ຽມຢາມ ໂດຍມີຈຸດປະສົງຢາກຈະມາພົວພັນນຳຄົນເຈັບ ຜູ້ປົກຄອງ ຫຼືຕົວແທນທີ່ ຖືກແຕ່ງຕັ້ງ ທາງກົດໝາຍຂອງຄົນເຈັບ ຈະຕ້ອງເຫັນໃຈຄົນເຈັບ ເທົ່າທີ່ຈະທຳໄດ້ກ່ຽວກັບການເປີດເຜີຍວ່າຄົນເຈັບໄດ້ເຂົ້າຮັກສາປິ່ນປົວຕົວໃນສຖນທີ່ເບິ່ງ ແຍງແຫ່ງນີ້.

**ສິດທິເພີ່ມເຕີມຂອງໂຄງການຮັກສາປິ່ນປົວ ທີ່ໃຫ້ການບໍຣິ ການ ປິ່ນປົວ ທີ່ໃຫ້ການບໍຣິການ ປິ່ນປົວທາງດ້ານການໃຊ້ ວັດຖຸ ເສບຕິດເຄມີ ຫຼືປິ່ນປົວ ທາງດ້ານສຸຂພາບຈິດໃຫ້ແກ່ ເດັກນ້ອຍ ວັຍຣຸ່ນ, ຫຼືສຖານທີ່ປິ່ນປົວຮັກສາ ດ້ານສຸຂພາບ ຈິດໃຫ້ແກ່ ເດັກວັຍຣຸ່ນຄົບຮອບ 24 ຊົ່ວໂມງ:**

## 23. ການແຍກຕົວແລະການຜູກມັດ

ຄົນເຈັບທີ່ເປັນເດັກວັຍຮຸ້ນທີ່ເຂົ້າຮັບການປິ່ນປົວໃນສຖານທີ່ປິ່ນປົວຮັກສາ ດັ່ງທີ່ໄດ້ກ່າວໄວ້ໃນພາກ 7 ມີສິດອິດສຣະຈາກການຜູກມັດ ຮ່າງກາຍ ແລະແຍກຕົວຍົກເວັ້ນແຕ່ໃນກໍຣະນີສຸກເສນທີ່ຄິດວ່າ ຄົນເຈັບນັ້ນອາດຈະໄປທໍາຮ້າຍໃຫ້ແກ່ຕົນເອງແລະຄົນເຈັບຜູ້ອື່ນ. ຫຼັກການນີ້ອາຈະໃຊ້ ບໍ່ໄດ້ໃນການລົງໂທດ, ເພື່ອປະຕິບັດກົດລະບຽບ, ຫຼືເພື່ອຄວາມສະດວກຂອງພນັກງານ. ການແຍກຕົວຫຼືຜູກມັດໃຊ້ໄດ້ພາຍຫຼັງໄດ້ຮັບຄໍາອະນຸຍາດ ຈາກນາຍແພດຜູ້ປິ່ນປົວໂຣກ ຫຼືນາຍແພດຈິຕະວິທະຍາເທົ່ານັ້ນ, ສເພາະແຕ່ເມື່ອວິທີປິ່ນປົວບໍ່ພຽງແຕ່ໃຊ້ໃນຍາມເພື່ອໃຫ້ລຸດຜ່ອນ ຈໍາກັດນັ້ນລົງເພື່ອຄໍານຶງຮາກຖານການຊັ່ງຊາຄວາມຜົນ ແລະ ຄວາມເປັນ ໄປໄດ້ທີ່ອາດເຄັ່ງຄັດໃຊ້ບໍ່ໄດ້ຜົນຫຼືເປັນໄປບໍ່ໄດ້ເທົ່ານັ້ນແລະ ໃນເວລາສັ້ນເທົ່ານັ້ນ.

## 24. ແຜນການປິ່ນປົວ

ຄົນເຈັບທີ່ເປັນເດັກໄວ້ຮຸ້ນທີ່ເຂົ້າຮັບການປິ່ນປົວໃນສຖານທີ່ປິ່ນປົວຮັກສາ ດັ່ງທີ່ໄດ້ກ່າວໄວ້ໃນ ພາກທີ 7 ມີສິດທີ່ຈະໄດ້ຮັບແຜນການປິ່ນປົວເປັນ ລາຍລັກອັກສອນ ໂດຍຈະບັນລະຍາຍບັນຫາປິ່ນປົວໂດຍໃຊ້ຄໍາສັບກິຣິຍາອັນແຈ້ງຂາວແຜນການ, ຈຸດປະສົງແຈ້ງຂາວຂອງແຜນການ ແລະຫຼັກການທີ່ຈະໃຊ້ເພື່ອເຮັດໃຫ້ການປິ່ນປົວຂອງເດັກວັຍຮຸ້ນສັ້ນລົງທີ່ສຸດ.ແຜນການປິ່ນປົວນັ້ນຕອ້ງໄດ້ບອກເຖິງຈຸດປະສົງທີ່ຈະສົ່ງຄົນເຈັບດັ່ງກ່າວໄປຫາສຖານທີ່ປິ່ນປົວຮັກສາທີ່ວ່າງຄັ່ງຄັດພ້ອມໄດ້ຮັບການປິ່ນປົວແລະບໍຣິການທີ່ເໝາະສົມເທົ່າທີ່ຈະປະຕິບັດໄດ້ແລະພໍ່ແມ່ຜູ້ປົກຄອງ ຂອງເດັກຕ້ອງໄດ້ເຂົ້າຮ່ວມໃນແຜນການ ປິ່ນປົວ ແລະແຜນການອອກຈາກສຖານທີ່.

ຄຳຮ້ອງທຸກຫຼືຂໍ້ສເນີໃດໆ ກ່ຽວກັບການປິ່ນປົວຮັກສາ ຫຼື ກ່ຽວກັບສິດທິຂອງຄົນໄຂ້, ກະຣຸນາ ຕິດຕໍ່ໄປທີ່:

ຄນະກັມມະການສາພາອຳນວຍການແພດສູງສຸດ
Minnesota Board of Medical Practice
2829 University Ave. SE, Suite 400
Minneapolis, MN 55414-3246
Tel: (612) 617-2130 ຫຼື (800) 657-3709

ຫ້ອງການຮັບຟັງຄຳຮ້ອງທຸກຂອງຄົນໄຂ້
Office of Health Facility Complaints
P.O.Box 64970
St. Paul, MN 55164-0970
Tel: (651) 215-8702 ຫຼື (800) 369-7994

ຫ້ອງການຮັບຟັງຄຳຮ້ອງທຸກສຳລັບຜູ້ເຖົ້າແກ່ ຣັຖມິນນີໂຊຕາ
Ombudsman for Older Minnesotans
Metro Square Building
121 East Seventh Place, Suite 410
St. Paul, MN 55101
Tel. (800) 657-3591 ຫຼື
(651) 296-0382 (ເຂດເທສບານ)

ຂໍ້ມູນນີ້ແມ່ນໄດ້ຮັບບໍຣິການ ຈາກທາງກະຊວງສາທາຣະນະສຸກ ແລະປະຊາຄົມຮ່ວມເພື່ອ ສຖານທີ່ ຢູ່ອາສັຍ. ການແປນີ້ແມ່ນໄດ້ຮັບທຶນບໍຣິຈາກ ກະຊວງ ສາທາຣະນະສຸກ ຣັຖມິນນີໂຊຕາ. ສຳຣັບ ລາຍລະອຽດເພີ່ມເຕີມ ກ່ຽວກັບເອກກະສານ ທີ່ແປນີ້, ກະຣຸນາ ຕິດຕໍ່ໄດ້ທີ່ກະຊວງສາທາຣະນະສຸກ ຣັຖມິນນີໂຊຕາ **Minnesota Department of Health (651) 215-8700.**